ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 026 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 06 ມັງກອນ 2020

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍກິລາ-ກາຍຍະກຳ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 29/ສພຊ, ລົງວັນທີ 25 ພະຈິກ 2019 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍກິລາ-ກາຍຍະກຳ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 31/ຄປຈ, ລົງວັນທີ 10 ທັນວາ 2019.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍກິລາ-ກາຍຍະກຳ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ສະພາແຫ່ງຊາດ** **ເລກທີ 29 /ສພຊ**

**ນະຄອນຫຼວງວຽງຈັນ, ວັນທີ 25 / 11 / 19**

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍກິລາ-ກາຍຍະກຳ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍກິລາ-ກາຍຍະກຳ (ສະບັບປັບປຸງ) ໃນວາລະກອງປະຊຸມ ຄັ້ງວັນທີ 25 ພະຈິກ 2019.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍກິລາ-ກາຍຍະກຳ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ | ເລກທີ 74 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25 ພະຈິກ 2019

# ກົດໝາຍ
# ວ່າດ້ວຍກິລາ-ກາຍຍະກຳ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານກິລາ-ກາຍຍະກຳ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີການຂະຫຍາຍຕົວ, ມີຄຸນນະພາບ, ກ້າວໜ້າ, ທັນສະໄໝ, ເສີມສ້າງບັນຍາກາດທີ່ສົດໃສໃນສັງຄົມ ເຮັດໃຫ້ພົນລະເມືອງລາວມີສຸຂະພາບແຂງແຮງ ທາງດ້ານຮ່າງກາຍ ແລະ ຈິດໃຈ, ມີນ້ຳໃຈນັກກິລາ, ເຄົາລົບກົດລະບຽບ, ກະຕິກາ ແລະ ມີສະຕິຊາດ ແນໃສ່ພັດທະນາຊັບພະຍາກອນມະນຸດ, ສົ່ງເສີມດ້ານພອນສະຫວັນ, ຍົກສູງຖານະບົດບາດ, ກຽດສັກສີຂອງຊາດ ແລະ ເພີ່ມທະວີຄວາມສາມັກຄີ, ມິດຕະພາບ ສາມາດເຊື່ອມໂຍງກັບອະນຸພາກພື້ນ, ພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

### ມາດຕາ 2 (ປັບປຸງ) ກິລາ-ກາຍຍະກຳ

ກິລາ-ກາຍຍະກຳ ແມ່ນ ຂະບວນການເຄື່ອນໄຫວທາງດ້ານຮ່າງກາຍ, ການຮຽນ, ການຝຶກແອບ, ການຝຶກຊ້ອມ, ການແຂ່ງຂັນ, ການສະແດງ, ການແລກປ່ຽນບົດຮຽນ ແບບບຸກຄົນ, ແບບໝູ່ຄະນະ ທີ່ມີສິລະປະ ແລະ ລວດລາຍສະເພາະກ່ຽວກັບກິລາ.

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ນັກກິລາ** ໝາຍເຖິງ ຜູ້ທີ່ຫຼິ້ນກິລາ, ເຂົ້າຮ່ວມ ຝຶກແອບ, ຝຶກຊ້ອມ, ສະແດງ ແລະ ແຂ່ງຂັນກິລາປະເພດໃດໜຶ່ງ;

2. **ບຸກຄະລາກອນກິລາ-ກາຍຍະກຳ** ໝາຍເຖິງ ຜູ້ບໍລິຫານການກິລາ, ຜູ້ຊ່ຽວຊານກ່ຽວກັບກິລາ, ນັກວິທະຍາສາດ, ນັກຈິດຕະສາດ, ນັກການແພດກິລາ, ກຳມະການຕັດສິນ ແລະ ຄູຝຶກກິລາ;